ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ

ຊື່ຜູ້ຈັດຊື້-ຈັດຈ້າງ : ຫ້ອງການ ກອງເລຂາ ເລກທີ 665/ຫກທດ.

ນະຄອນຫຼວງວຽງຈັນ, ວັນທີ 10 ພະຈິກ 2025

## ຫນັງສືແຈ້ງເຊີນປະມູນ

1. ຫ້ອງການ ກອງເລຂາກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ການສ້າງຄຣີບເຜີຍແຜ່ຂໍ້ມູນຂ່າວສານ ແລະ ໂຄສະນາປະຊາສຳພັນ ກ່ຽວກັບວຽກງານກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍ, ເອກະສານປະກອບມີ: ສຳເນົາໃບທະບຽນວິສາຫະກິດ, ຫນັງສືອະນຸຍາດ ດຳເນີນທຸລະກິດ ຫຼື ເອກະສານຢັ້ງຢືນການຕໍ່ໜັງສືອານຸຍາດດຳເນີນທຸລະກິດ ປີ 2025, ຫນັງສືຢັ້ງຢືນການຊຳລະອາກອນ ຫຼື ເອກະສານຢັ້ງຢືນການຕໍ່ໜັງສືອານຸຍາດການຊຳລະອາກອນ ປະຈຳປີ 2024 ຫຼື 2025, ໜັງສືຄ້ຳປະກັນການປະມູນ 2% ຂອງມູນຄ່າ ເປັນແຊັກເງິນສົດ ໂດຍອອກຊື່ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ແລະ ໃບຢັ້ງຢືນສະຖານະທາງການເງິນ.
4. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການ ກອງເລຂາກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ, ຕາມວັນ ແລະ ເວລາທາງລັດຖະການ ເບີໂທ: 020 9988 4778 ບ້ານຊຽງຢືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ທີ່ຫ້ອງການ ກອງເລຂາ, ເລີ່ມແຕ່ວັນທີ 11 ພະຈິກ ຫາ 28 ພະຈິກ 2025, ໃນລາຄາ 1.000.000 ກີບ ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
6. ກຳນົດເວລາໃນການສົ່ງຊອງປະມູນ ແລະ ເປີດຊອງປະມູນ, ຕ້ອງສົ່ງຊອງປະມູນກ່ອນເວລາ 14:00 ໂມງ ຂອງວັນທີ 28 ພະຈິກ 2025 ທີ່ຫ້ອງປະຊຸມຊັ້ນ 02 ຂອງຕຶກກະຊວງ ເຕັກໂນໂລຊີ ແລະ ການສື່ສານ. ບ້ານ ຊຽງຢືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ຊອງປະມູນໃດສົ່ງຊ້າໃນເວລາທີ່ ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 28 ພະຈິກ 2025 ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ, ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມ.

ຫົວໜ້າຫ້ອງການກອງເລຂາ

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ

ຫ້ອງການກອງເລຂາ

ປະລິນຍາ ພົມມະວິເສດ